

ບົດລາຍງານການດຳເນີນທຸລະກິດ

ປະຈຳ 6 ເດືອນຕົ້ນ ປີ 2022

ບໍລິສັດ ພູສົ່ງ ແລະ ພັດທະນາ ມະຫາຊົນ

ສາລະບານ

I. ປະຫວັດຄວາມເປັນມາຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາມະຫາຊົນ 3
ທີ່ຕັ້ງສຳນັກງານ 5
II. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ 6
III. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ 7
3.1. ໂຄງຮ່າງການຈັດຕັ້ງ 7
3.2. ຜູ້ຖືຮຸ້ນ. 7
3.3. ສະພາບໍລິຫານ 7
3.4. ຄະນະກຳມະການກວດສອບ 8
3.5. ຄະນະກຳມະການຄຸ້ມຄອງຄວາມສ່ຽງ 8
3.6. ຄະນະກຳມະການກຳນົດຄ່າຕອບແທນ 8
IV. ຄວາມຄືບໜ້າການດຳເນີນທຸລະກິດປະຈຳ 6 ເດືອນຕົ້ນ ປີ 2022 8
4.1. ວຽກດ້ານບຸກຄະລາກອນ 8
4.2. ວຽກການຕະຫຼາດ 9
V. ແຜນໂຄງການສືບຕໍ່ຈັດຕັ້ງປະຕິບັດ 10
VI. ໂຄງການໃນແຜນປີ 2022-2025 10
ການຊອກຫາໂຄງການ 10
ກົນລະຍຸດການແຂ່ງຂັນ 11
VII. ວຽກງານດ້ານຍຸດທະສາດອົງກອນ 12

I. ປະຫວັດຄວາມເປັນມາຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (“ ບໍລິສັດ” ຫຼື “PCD”) ເປັນໜຶ່ງໃນຜູ້ໃຫ້ບໍລິການວຽກງານວິສະ ວະ ກຳການກໍ່ສ້າງແບບຄົບວົງຈອນ (Design and Engineering Procurement Construction: Design and EPC) ເຊິ່ງລວມກັບວຽກດັ່ງນີ້: ວຽກງານການອອກແບບໂຄງສ້າງວິສະວະກຳ (Design), ວຽກງານຈັດການແບບ ງານວິ ສະວະກຳ (Engineering), ວຽກງານການຈັດຫາອັດສະດຸອຸປະກອບສຳລັບງານວິສະວະກຳ (Procurement) ແລະ ວຽກງານກໍ່ສ້າງ (Construction). ໂດຍບໍລິສັດມີເປົ້າໝາຍໃຫ້ ບໍລິການໃນວຽກງານວິສະວະກຳພື້ນຖານໂຄງລ່າງເປັນ ຫຼັກເຊັ່ນ: ວຽກກໍ່ສ້າງຖະໜົນ ຫົນທາງ, ຕ້ານເຈື່ອນ ແລະ ພື້ນຖານໂຄງລ່າງອື່ນໆ

ດ້ວຍວິໄສທັດອັນກວ້າງໄກຂອງທ່ານ ສີພອນ ອຸທຸມພອນ (ທ່ານ ສີພອນ) ເຊິ່ງໄດ້ເບິ່ງເຫັນຄວາມຍຸ້ງຍາກໃນການ ເດີນທາງ ຂອງປະຊາຊົນ ປະກອບກັບເຂດພູມສັນຖານຂອງປະເທດເປັນເຂດພູສູງ ເຊິ່ງຍາກຕໍ່ການເດີນທາງ ໄປມາ ລະຫວ່າງບ້ານ, ເມືອງ, ແລະ ແຂວງ ລວມເຖິງ ທ່ານ ສີພອນ ມີແນວຄວາມຄິດຈະເຂົ້າຮ່ວມເປັນກົນຈັກໜຶ່ງໃນການຊຸກຍູ້ ເສີມສ້າງ ໂອກາດໃນການເຕີບໂຕທາງເສດຖະກິດໃນ ສປປ ລາວ . ໂດຍສະເພາະໃນເຂດພາກເໜືອຂອງປະເທດ ດັ່ງນັ້ນ, ໃນປີ 1997 ທ່ານ ສີພອນ ຈຶ່ງໄດ້ສ້າງຕັ້ງບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວທາງ ຈຳກັດຜູ້ດຽວ ດ້ວຍທຶນ ຈົດທະບຽນ 10.000 ລ້ານກີບ ໂດຍມີເປົ້າໝາຍເພື່ອດຳເນີນກິດຈະການກໍ່ສ້າງພື້ນຖານໂຄງລ່າງເພື່ອອຳນວຍຄວາມ ສະດວກດ້ານການຄົມມະນາຄົມຂົນສົ່ງ ແລະ ການພົວພັນລະຫວ່າງແຂວງທາງພາກເໜືອໃຫ້ດີຂຶ້ນ. ໃນເວລານີ້ທ່ານສີທອງ ພົມມະຈິດ ກໍ່ແມ່ນໜຶ່ງໃນຜູ້ບໍລິຫານຈັດການຂອງບໍລິສັດດັ່ງກ່າວ.

ບໍລິສັດແມ່ນມີການເຕີບໃຫ່ຍຂະຫຍາຍຕົວຈົນຂຶ້ນມາເປັນບໍລິສັດທີ່ໃຫ້ບໍລິການດ້ານວິສະວະກຳການການ ກໍ່ສ້າງຂັ້ນແນວໜ້າໃນເຂດພາກເໜືອຂອງ ສປປ ລາວ. ຈົນ ມາຮອດປີ 2009 ທ່ານ ສີທອງ ພົມມະຈິດ (ທ່ານ ສີທອງ) ເຊິ່ງ ເປັນນັກທຸລະກິດໜຸ່ມຜູ້ມີວິໄສທັດ ໄດ້ເຂົ້າມາຮັບສືບທອດຂະຫຍາຍຕໍ່ໃນວຽກງານກໍ່ສ້າງຂອງບໍລິສັດ ໂດຍການໂອນຖ່າຍ ກິດຈະການຈາກທ່ານ ສີພອນ ໂດຍຍັງໃຊ້ຊື່ເດີມເປັນບໍລິສັດມີ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ -ທາງ ຈຳກັດຜູ້ ດຽວ ເຊິ່ງມີຜົນງານການໃຫ້ບໍລິການກໍ່ສ້າງໂຄງການທີ່ສຳຄັນຕ່າງໆເຊັ່ນ: ກໍ່ສ້າງທາງ ປູຢາງ 2 ຊັ້ນໃນເຂດພາກເໜືອ, ສ້າງ ທາງເອັ້ນຕົວເມືອງຫຼວງພະບາງ, ບຸກທະລຸເສັ້ນທາງລຽບຊາຍແດນ ສປປ ລາວ ຫວຽດນາມ-ກຳປູເຈຍ. ສອມແປງທາງຈາກ ຄວາມເສຍຫາຍໄພພິບັດຈາກທຳມະຊາດ ແລະ ອື່ນໆ. ບໍລິສັດຖືໄດ້ວ່າເປັນບໍລິສັດທີ່ມີ ສັກກະຍະພາບໃນການເປັນຜູ້ນຳ ດ້ານການພັດທະນາການກໍ່ສ້າງພື້ນຖານໂຄງລ່າງໄດ້ເປັນຢ່າງດີ. ພຽບພ້ອມດ້ວຍທີມງານທີ່ມີຄວາມຮູ້ຄວາມ, ມີເຕັກນິກ ທາງດ້ານວິສະວະກຳການກໍ່ສ້າງ ແລະ ເຕັກໂນໂລຊີການກໍ່ສ້າງທີ່ທັນສະໄໝ, ຮັກສາຄຸນນະພາບ ແລະ ມາດຕະຖານໃນ ການເຮັດວຽກໄດ້ ເປັນຢ່າງດີ, ສົ່ງມອບງານທັນເວລາ, ສ້າງຄວາມເຊື່ອຖືໃຫ້ກັບລູກຄ້າທີ່ເປັນເຈົ້າຂອງໂຄງການ. ໃນປັຈ ບັນບໍລິສິດໄດ້ປ່ຽນຊື່ມາເປັນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເພື່ອຂະຫຍາຍຂອບເຂດ ການໃຫບໍລິການ ດ້ານວິສະວະກຳການກໍ່ສ້າງແບບຄົບວົງຈອນ ແລະ ເປັນຜູ້ພັດທະນາໂຄງການຕໍ່ໄປໃນອະນາຄົດ .

ປີ		ສະຫຼຸບຫຍໍ້ເຫດການທີ່ພົ້ນເດັ່ນ
ປີ 1997	:	ບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ-ທາງ ຈຳກັດຜູ້ດຽວ ໄດ້ຖືກສ້າງຕັ້ງຂຶ້ນດ້ວຍທຶນຈົດທະບຽນ 10.000 ລ້ານກີບໂດຍທ່ານ ສີພອນ ອຸທຸມພອນ (ທ່ານ ສີພອນ) ເພື່ອດຳເນີນກິດຈະການ ງານກໍ່ສ້າງໂດຍເຂົ້າຮ່ວມປະມູນໂຄງການຈາກພາກລັດ ຫຼື ກະຊວງ ຍທຂ ກົມຂົວທາງ ຫຼື ພະແນກ ຍທຂ ປະຈຳແຂວງຫຼວງພະບາງ. ທ່ານ ສີພອນ ໄດ້ເບິ່ງເຫັນຄວາມຍຸ້ງຍາກຂອງການເດີນທາງໂດຍທາງລົດ ຂອງປະຊາຊົນ ຫຼື ການຂົນສົ່ງເນື່ອງຈາກຖະໜົນຫົນທາງບໍ່ດີ ແລະ ມີອັນຕະລາຍ ລວມເຖິງໄດ້ເບິ່ງເຫັນ ການຂະຫຍາຍຕົວຂອງທຸລະກິດຮັບເໝົາກໍ່ສ້າງໃນຊ່ວງນັ້ນໂດຍແມ່ນແນໃສ່ການກໍ່ສ້າງໃນພາກສ່ວນຂອງພື້ນຖານໂຄງລ່າງເປັນຫຼັກທີ່ຢູ່ໃນຂົງເຂດພາກເໜືອຂອງ ສປປ ລາວ.
ປີ 2004-2005	:	ຈາກການຈະເລີນເຕີບໂຕຢ່າງຫຼວງຫຼາຍຂອງເສດຖະກິດຂອງປະເທດ ແລະ ການຂະຫຍາຍຕົວເມືອງນ້ອຍ-ໃຫ່ຍປະກອບກັບການຂົນສົ່ງສິນຄ້າໂດຍທາງລົດ ແມ່ນມີຄວາມຈຳເປັນຫຼາຍຂຶ້ນ. ທ່ານ ສີພອນ ຈຶ່ງໄດ້ຂະຫຍາຍທຸລະກິດຮັບເໝົາກໍ່ສ້າງໄປຍັງແຂວງ ໄຊຍະບູລີ ແລະ ແຂວງ ບໍ່ແກ້ວ ໂດຍຍັງເນັ້ນວຽກງານການກໍ່ສ້າງພື້ນຖານໂຄງລ່າງເຊັ່ນ: ຖະໜົນຫົນທາງ ແລະ ຂົວ. ເຊິ່ງໃນຂະນະນີ້ເອງ ທ່ານ ສີທອງ ພົມມະຈິດ (ທ່ານ ສີທອງ)ເຂົ້າ ມາເປັນຜູ້ບໍລິຫານ ດ້ານ ການຈັດການຫ້ອງການ ແລະ ງານພາກສະໜາມຂອງບໍລິສັດ .
ປີ 2009	:	ທ່ານ ສີທອງ ເຊິ່ງເປັນນັກທຸລະກິດໜຸ່ມຜູ້ມີວິໃສ່ທັດໄດ້ເຂົ້າມາຮັບສືບທອດຂະຫຍາຍຕໍ່ໃນວຽກງານກໍ່ສ້າງຂອງບໍລິສັດ ໂດຍມີການໂອນຖ່າຍກິດຈະການຈາກທ່ານ ສີພອນ ມາຍັງທ່ານສີທອງ ໂດຍຍັງຄົງໃຊ້ຊື່ ບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ - ທາງ ຈຳກັດ ຜູ້ດຽວ.
ປີ 2011		ທ່ານ ສີທອງໄດ້ເຫັນການຂະຫຍາຍຕົວຂອງຕົວເມືອງຫຼວງພະບາງໃນພາກພື້ນທີ່ແອັດຈຶ່ງໃດ້ປຶກສາກັບທີມຜູ້ບໍລິການຂອງບໍລິສັດ ສະເໜີໂຄງການໄປຍັງພະແນກ ຍທຂ ປະຈຳ ແຂວງ ຫຼວງພະບາງ ເພື່ອອະນຸມັດໂຄງການກໍ່ສ້າງທາງເວັ້ນຕົວເມືອງຫຼວງພະບາງ (By pass road) ເສັ້ນທາງ 13 ເໜືອ ຕັ້ງແຕ່ບ້ານ ກົ໊ກງົ໊ວ ຫາ ບ້ານພອນໄຊ ແລະ ຂົວເບ໊ງຂ້າມແມ່ນ້ຳຄານ 1 ແຫ່ງ. ດ້ວຍມູນຄ່າໂຄງການທັງໝົດປະມານ 209.907 ລ້ານກີບ. ເຊິ່ງ ບໍລິສັດແມ່ນໃຊ້ເງິນທຶນໝຸນວຽນຂອງບໍລິສັດເຂົ້າໃນການກໍ່ສ້າງທັງໝົດ.

ປີ 2016	:	ຕາມກອງປະຊຸມຜູ້ຖືຮຸ້ນໃນວັນທີ 18 ຕຸລາ 2016 ໄດ້ອະນຸມັດປັບປຸງມູນຄ່າກຳນົດ (Par Value) ເປັນ 2.000 ກີບຕໍ່ຮຸ້ນ, ອະນຸມັດການເພີ່ມທຶນຂອງບໍລິສັດຈາກເດີມ 10.000 ລ້ານ ກີບ ເປັນ700.000 ລ້ານ ກີບ ເຊິ່ງບໍລິສັດ ໄດ່ປ່ຽນຮູບແບບວິສາຫະກິດ ຈາກ ບໍລິສັດພູສີ ຫຼວງພະບາງກໍ່ສ້າງ ແລະ ສອມແປາຂົວ -ທາງ ຈຳກັດດຽວ ມາເປັນ **“ບໍລິສັດ ພູສີກໍ່ສ້າງແລະພັດທະນາມະຫາຊົນ”** . ອີງຕາມກອງປະຊຸມຜູ້ຖືຮຸ້ນ ໃນວັນທີ 18 ພະຈິກ 2016 ບໍລິສັດໄດ້ມີການປະຊຸມວິສາມັນຜູ້ຖືຮຸ້ນ ໄດ້ອະນຸມັດເລື່ອງທີ່ສຳຄັນ ຄື: ອະນຸມັດການເພີ່ມທຶນຈົດທະບຽນ 300.000 ລ້ານ ກີບ ໂດຍ ອອກຮຸ້ນສາມັນເພີ່ມທຶນຈຳນວນ 150 ລ້ານ ຮຸ້ນ , ມູນຄ່າກຳນົດ 2.000 ກີບຕໍ່ນຮຸ້ນ ເພື່ອການ ອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ແລະ ຮອງຮັບ ການ ຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ (LSX) ສົ່ງຜົນໃຫ້ບໍລິສັດຈະມີທຶນຈົດທະບຽນທັງໝົດ 1.000.000 ລ້ານກີບພາຍຫຼັງ IPO.
ປີ 2017		ໃນວັນທີ 9 ພຶດສະພາ 2017, ທາງຄະນະກຳມະການຄຸ້ມຄອງຫລັກຊັບ ໄດ້ອອກແຈ້ງການ ເລກທີ 220/LSCO ເຖິງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໂດຍມີການແນະນຳໃຫ້ຫຼຸດ ມູນຄ່າ ຮຸ້ນກຳນົດ (par value) ຈາກ 2.000 ກີບ ມາ ເປັນ 1.000 ກີບ ຕໍ່ ຮຸ້ນ ແລະ ໃຫ້ມີ ການ ຫຼຸດ ທຶນຈົດທະບຽນ ຈາກ 700.000 ລ້ານກີບ ເປັນ 500.000 ລ້ານກີບ ເຊິ່ງສຳເລັດການ ປ່ຽນ ທຶນຈົດທະບຽນ ທີ່ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນວັນ ທີ 27 ເດືອນ 6 ປີ 2017. ໃນວັນທີ 02 ຕຸລາ 2017 ບໍລິສັດ ໄດ້ຈົດທະບຽນເພີ້ມທຶນ 82.000 ລ້ານກີບ ພາຍຫຼັງການ ອອກ ຈຳຫນ່າຍຮຸ້ນ IPO ຈຶ່ງ ເຮັດໃຫ້ ທຶນຈົດທະບຽນຂອງ ບໍລິສັດ ທັງຫມົດ ເປັນ 582.000 ລ້ານກີບ. ໃນ ວັນທີ 10 ຕຸລາ 2017 ເປັນມື້ທີ່ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໄດ້ມີການ ຈົດທະບຽນເຂົ້າຕະຫລາດຫລັກຊັບລາວ ແລະ ເປັນມື້ເປີດຂາຍຮຸ້ນ ສາມັນ ມື້ທຳອິດຂອງບໍລິສັດ ຊຶ່ງມີຮຸ້ນສາມັນຈຳນວນ 82 ລ້ານຮຸ້ນ ໃນລາຄາ ກຳນົດ (par value) 1.000 ກີບ ຕໍ່ ຮຸ້ນ. ລາຄາ ເປີດໂຕ ແມ່ນ 1.300 ກີບຕໍ່ຮຸ້ນ ແລະ ປິດການຂາຍໃນມື້ດັ່ງກ່າວໃນລາຄາ 1.350 ກີບ.

➢ ທີ່ຕັ້ງສຳນັກງານ

- ຊັ້ນ 3 ອາຄານ ໂຮງແຮມຄອນຕິເນັນໂທພລາຊາວຽງຈັນ, ບ້ານໜອງບົວທອງໃຕ້, ເມືອງສີໂຄດຕະບອງ , ນະຄອນຫຼວງວຽງຈັນ.
- ໂທລະສັບ: +856 21 229696.
- ແຟັກ: 0856 21 265394
- E-Mail: info@pcdlao.com
- Website: www.pcdlao.com

II. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ

- **ວິໃສທັດ**

ບໍລິສັດຕັ້ງເປົ້າໝາຍຈະກ້າວຂຶ້ນມາເປັນຜູ້ນຳທາງດ້ານການກໍ່ສ້າງ, ເຕັກໂນໂລຊີ ແລະ ການພັດ ທະນາພາຍໃນປະເທດ ແລະຈະຂະຫຍາຍທຸລະກິດໄປເຖິງຂົງເຂດປະຊາຄົມອາຊຽນໃນອະນາຄົດ.

- **ພາລະກິດ**

ບໍລິສັດຕັ້ງໃຈຢ່າງຍິ່ງທີ່ຈະສະໜອງການບໍລິການໃຫ້ແກ່ລູກຄ້າ ໃນລະດັບສາກົນຢ່າງຮອບດ້ານເຊັ່ນ: ຄຸນນະພາບ, ທັນກັບ ເວລາ, ເອົາໃສ່ໃຈໃນລາຍລະອຽດ ແລະຊື່ສັດ ເປັນທຳ ຕໍ່ຄູ່ຮ່ວມງານແລະລູກຄ້າ.

ຄຸນຄ່າທີ່ພວກເຮົາຍຶດຖື:

P: ປະຕິບັດວຽກຢ່າງມີປະສິດທິພາບ

C: ຮັດແໜ້ນສາຍສຳພັນກັບຄູ່ຄ້າເປັນບຸລິມະສິດອັນດັບໜຶ່ງ.

D: ວຽກສຳເລັດຕາມກຳນົດເວລາ ແລະ ຮັບປະກັນຄຸນນະພາບ.

III. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ

3.1. ໂຄງຮ່າງການຈັດຕັ້ງ

ສະພາບໍລິຫານ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ / Board of Directors



ທ່ານ ປອ ສີທອງ ພົມມະຈິດ ປະທານສະພາບໍລິຫານ

Ph.D Sithong PHOMMACHITH **Chairman**



ທ່ານ ບຸນມີ ມະນີວົງວົງ

ຮອງປະທານສະພາບໍລິຫານ / ສະມາຊິກ

ອິດສະຫຼະ Mr. Bounmy MANYVONG

Vice Chairman / Independent Member



ທ່ານ ສີທາ ພົມມະຈິດ

ສະມາຊິກສະພາບໍລິຫານ/ ຜູ້ອຳນວຍການໃຫຍ່

Mr. Sitha PHOMMACHITH

Member / Chief Executive Officer



ທ່ານ ພູໂຂງ ອ້ວນລະມະນີ ສະມາຊິກສະພາບໍລິຫານ

Mr. Phoukhong OUANLAMANY

Member



ທ່ານ ນັນທະລັດ ທິລະກຸນ ສະມາຊິກອິດສະຫຼະ

Mr. Nanthalath THILAKUN **Member / Independent Member**

ຄະນະຜູ້ອຳນວຍການໃຫຍ່

Managing Directors of PCD



ທ່ານ ສີທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
Mr. Sitha PHOMMACHITH
Chief Executive Officer



ທ່ານ ອຳໄพວັນ ຈັນທະຜາລີ
ຜູ້ຊ່ວຍຜູ້ອຳນວຍການໃຫຍ່ຝ່າຍປະຕິບັດການ
Mr. Amphaivanh CHANHTHAPHALY
Chief Operations Officer



ທ່ານ ອາໂນໄລ ສີທາຣາດ
ຜູ້ຊ່ວຍຜູ້ອຳນວຍການໃຫຍ່ຝ່າຍການເງິນ
Mr. Anolay SIHARATH
Chief Financial Officer



ທ່ານ ດວງ ປະທຸມລັກ
ພະແນກ ຈັດຕັ້ງ ບໍລິຫານ
Mr. Duang PATHOUMLACK
Head of HR and Administration Department



ທ່ານ ພຸດທະເສນ ພົມມິໄຊ
ພະແນກ ພັດທະນາທຸລະກິດ ແລະ ການຕະຫຼາດ
Mr. Phoutthasen PHOMMIXAY
Head of Business Development and Marketing Department



ທ່ານ ວິລະຄົມ ພິລາກຸນ
ພະແນກ ອອກແບບ ແລະ ສຳຫລວດ
Mr. Vilakhom PHILAKOUN
Head of Design and Survey Department



ທ່ານ ເກດສະໜາ ຈັນທະວົງ
ພະແນກ ກໍ່ສ້າງ ເຕັກນິກ
Mr. Kethsana CHANHTHAVONG
Head of Construction and Monitoring Deparment



ທ່ານ ນາງ ໄຮທອງ ພົມມະຈິດ
ພະແນກ ການບັນຊີ ການເງິນ
Mrs. Haithong PHOMMACHITH
Head of Finance and Accounting Deparment



ທ່ານ ບຸນທິດ ທອງສັກດີ
ພະແນກ ພະແນກສາງ
Mr. Bounthod THONGSACKDY
Head of Inventory Department



ທ່ານ ຄອນສະຫວັນ ທຳວົງສິດ
ພະແນກ ຈັດຊື້ຈັດຈ້າງ
Mr. Khonesavanh THAMVONGSITH **Head of Procurement Department**

3.2. ຜູ້ຖືຮຸ້ນ.

ຜູ້ຖືຮຸ້ນ	ອັດຕາສ່ວນກ່ອນການອອກຈຳໜ່າຍຮຸ້ນ IPO		ອັດຕາສ່ວນຫຼັງການອອກຈຳໜ່າຍຮຸ້ນ IPO	
	ຈຳນວນຮຸ້ນ	ອັດຕາສ່ວນ	ຈຳນວນຮຸ້ນ	ອັດຕາສ່ວນ
I. ກຸ່ມຜູ້ຖືຮຸ້ນເດີມ	500,000,000	100%	500,000,000	100%
1.1 ທ່ານ ປອ ສີທອງ ພົມມະຈິດ	415,000,000	83.00%	415,000,000	69.17%
1.2 ທ່ານ ນາງ ປ່ຽນຄຳ ພົມມະຈິດ	50,000,000	10.00%	50,000,000	8.35%
1.3 ທ່ານ ສີພອນ ອຸທຸມພອນ	5,000,000	1.00%	5,000,000	0.83%
1.4 ທ່ານ ນາງ ບົວພັນ ອຸທຸມພອນ	5,000,000	1.00%	5,000,000	0.83%
1.5 ທ່ານ ສີທາ ພົມມະຈິດ	5,000,000	1.00%	5,000,000	0.83%
1.6 ທ່ານ ນາງ ໄຮທອງ ພົມມະຈິດ	5,000,000	1.00%	5,000,000	0.83%
1.7 ທ່ານ ອຳພອນ ພົມມະຈິດ	5,000,000	1.00%	5,000,000	0.83%
1.8 ທ່ານ ນາງ ຕຸ້ຍບົວສີ ພົມມະຈິດ	5,000,000	1.00%	5,000,000	0.83%
1.9 ທ່ານ ນາງ ເພັດມະນີ ອຸທຸມພອນ	5,000,000	1.00%	5,000,000	0.83%
II.ນັກລົງທຶນທົ່ວໄປ			82,000,000	16.67%
	500,000,000		**582,000,000**	

3.3. ສະພາບໍລິຫານ

ສະມາຊິກສະພາບໍລິຫານ ມີ 5 ທ່ານ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ປອ ສີທອງ ພົມມະຈິດ	ປະທານສະພາບໍລິຫານ
2	ທ່ານ ບຸນມີ ມະນີວົງ	ຮອງປະທານສະພາບໍລິຫານ/ສະມາຊິກອິດສະຫຼະ
3	ທ່ານ ນັນທະລັດ ທິລາກຸນ	
4	ທ່ານ ສີທາ ພົມມະຈິດ	ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່
5	ທ່ານ ພູຂົງ ອ້ອນລະມະນີ	ສະມາຊິກສະພາບໍລິຫານ

3.4. ຄະນະກຳມະການກວດສອບ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ນັນທະລັດ ທິລາກຸນ	ປະທານຄະນະກຳມະການກວດສອບ
2	ທ່ານ ບຸນມີ ມະນີວົງ	ຄະນະກຳມະການກວດສອບ
3	ທ່ານ ສີທາ ພົມມະຈິດ	ຄະນະກຳມະການກວດສອບ

3.5. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ບຸນມີ ມະນີວົງ	ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ
2	ທ່ານ ນັນທະລັດ ທິລາກຸນ	ຄະນະກຳມະການຄຸ້ມຄອງຄວາມສ່ຽງ
3	ທ່ານ ສີທາ ພົມມະຈິດ	ຄະນະກຳມະການຄຸ້ມຄອງຄວາມສ່ຽງ

3.6. ຄະນະກຳມະການກຳນົດຄ່າຕອບແທນ


ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ນັນທະລັດ ທິລາກຸນ	ປະທານຄະນະກຳມະການກຳນົດຄ່າຕອບແທນ
2	ທ່ານ ປອ ສີທອງ ພົມມະຈິດ	ຄະນະກຳມະການກຳນົດຄ່າຕອບແທນ
3	ທ່ານ ສີທາ ພົມມະຈິດ	ຄະນະກຳມະການກຳນົດຄ່າຕອບແທນ

IV. ຄວາມຄືບໜ້າການດຳເນີນທຸລະກິດປະຈຳ 6 ເດືອນຕົ້ນ ປີ 2022

4.1. ວຽກດ້ານບຸກຄະລາກອນ

ການດຳເນີນວຽກງານດ້ານບຸກຄະລາກອນໃນປະຈຳ 6 ເດືອນຕົ້ນ ປີ 2022 ແມ່ນໄດ້ເນັ້ນນັກການຝຶກອົບຮົມ, ປັບປຸງ ໂຄງຮ່າງການຈັດຕັ້ງຂອງອົງກອນ ເພື່ອໃຫ້ສອດຄ່ອງຕາມໂຄງສ້າງ ແລະ ເງື່ອນໄຂຂອງຕະຫຼາດຫຼັກຊັບລາວ. ດ້ານສະຫວັດດີການສັງຄົມ, ການດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ດີຂຶ້ນ ບໍລິສັດໄດ້ເຮັດ ການສຳຫຼວດເພື່ອກະກຽມສະຫນອງປະກັນສັງຄົມໃຫ້ແກ່ພະນັກງານທຸກຄົນ, ມີການກວດສຸຂະພາບປະຈຳປີ, ເຮັດ ວຽກຕາມວັນເວລາ ແລະ ມີມື້ລາພັກປະຈຳປີ ຕາມກົດໝາຍແຮງງານລາວວ່າງອອກ.

- ຈຳນວນພະນັກງານທັງໝົດຮອດວັນທີ: 31/03/2022 ມີຈຳນວນ 161 ຄົນ
- ການລາອອກ 12 ຄົນ
- ຮັບພະນັກງານໃຫມ່ 0 ຄົນ
- ຖືກເລື່ອນຕຳແໜ່ງ 0 ຄົນ



➢ **ເງິນເດືອນ ແລະ ສະຫວັດດີການ**

- ອັດຕາການເພີ່ມຂຶ້ນຂອງເງິນເດືອນ 0 %

➢ **ຈັດກິດຈະກຳສ້າງຄວາມສາມັກຄີໃນໝູ່ພະນັກງານ**

- ບໍ່ມີການຈັດກິດຈະກຳ (ເນື່ອງຈາກປະຕິບັດມາຕະການຄວບຄຸມການລະບາດພະຍາດໂຄວິດ 19)

➢ **ການສົ່ງເສີມສ້າງຄວາມອາດສາມາດໃຫ້ແກ່ພະນັກງານ**

- ມີການຝຶກອົບຮົມ ແລະ ສຳມະນາ

4.2. ວຽກການຕະຫຼາດ

ເນື່ອງຈາກບໍລິສັດເປັນຜູ້ໃຫ້ບໍລິການວຽກງານວິສະວະກຳກໍ່ສ້າງແບບຄົບວົງຈອນ ໂດຍເນັ້ນການໃຫ້ບໍລິການໃນສ່ວນວຽກພື້ນຖານໂຄງລ່າງ ເຊິ່ງສ່ວນໃຫຍ່ເຈົ້າຂອງໂຄງການຈະເປັນໜ່ວຍງານພາກລັດ ດັ່ງນັ້ນ, ການເຮັດການຕະຫຼາດຂອງບໍລິສັດຈະເນັ້ນໄປຍັງກຸ່ມເປົ້າໝາຍໜ່ວຍງານພາກລັດ ແລະ ເອກະຊົນ ໂດຍເນັ້ນການສົ່ງມອບໂຄງການທີ່ມີຄຸນະພາບ ທັນກັບເວລາ ເຊິ່ງເປັນປັດໄຈຫຼັກທີ່ຈະເຮັດໃຫ້ເຈົ້າຂອງໂຄງການມີຄວາມເຊື່ອໝັ້ນໃນຄຸນະພາບຂອງໂຄງການທີ່ບໍລິສັດເປັນຜູ້ກໍ່ສ້າງ ລວມເຖິງເປັນການສ້າງໂອກາດໃຫ້ບໍລິສັດໄດ້ຮັບວຽກເພີ່ມຕື່ມຈາກໜ່ວຍງານພາກລັດດັ່ງກ່າວ ນອກເໜືອຈາກນີ້, ບໍລິສັດຍັງຕ້ອງສ້າງຄວາມສຳພັນອັນດີກັບໜ່ວຍງານພາກລັດ ໃນການໃຫ້ຂໍ້ມູນ ແລະ ແລກປ່ຽນຂໍ້ມູນທາງດ້ານວິຊາການທີ່ກ່ຽວກັບການກໍ່ສ້າງ ລວມເຖິງການສຶກສາ ຊອກຄົ້ນພື້ນທີ່ ເພື່ອພັດທະນາໂຄງການການກໍ່ສ້າງເສັ້ນທາງເພີ່ມຕື່ມ ອັນເປັນການເຮັດການຕະຫຼາດ ເຊິ່ງສິ່ງຜົນໃຫ້ບໍລິສັດມີໂອກາດອັນດີທີ່ຈະໄດ້ວຽກປະມູນໃນໂຄງການຕ່າງ ເພີ່ມຕື່ມອີກດ້ວຍ.

ໃນປະຈຸບັນ PCD ແມ່ນໄດ້ສືບຕໍ່ຈັດຕັ້ງປະຕິບັດໂຄງການທີ່ຍັງບໍ່ທັນສຳເລັດ 2 ໂຄງການຄື: ໂຄງການກໍ່ສ້າງທາງ ປູຢາງ 2 ຊັ້ນ ແຕ່ບ້ານອູ້ ນະຄອນຫຼວງພະບາງ ຫາ ບ້ານ ສີບຸນເຮືອງ ເມືອງ ນານ ແຂວງຫຼວງພະບາງລວງຍາວ 50.2 ກິໂລແມດ ແລະ ໂຄງການກໍ່ສ້າງທາງຍີກລະດັບ ແຕ່ບ້ານກ໋ອເຈຍ ຫາ ບ້ານເມືອງຮຶບ ເມືອງໂພນທອງ ແຂວງຫຼວງພະບາງ ຄວາມຍາວ 32.565 ກິໂລແມັດ.

V. ແຜນໂຄງການສືບຕໍ່ຈັດຕັ້ງປະຕິບັດ

1. ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊເຊິ່ງມີມູນຄ່າທັງໝົດ ປະມານ 4 ຕື້ກວ່າໂດລາ ແລະ ພວກເຮົາ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ແມ່ນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຂັດເລືອກເຂົ້າຮອບສຸດທ້າຍແມ່ນ ການສຳຫຼວດອອກແບບແລວທາງແມ່ນສຳເລັດແລ້ວປະຈຸບັນແມ່ນກະຊວງໂຍທາ ແລະ ຂົນສົ່ງກຳລັງກະກຽມ ຍື່ນແບບຕໍ່ລັດຖະບານເພື່ອຮັບຮອງ (ສະເພາະທີ່ບໍລິສັດພູສີຮັບຜິດຊອບແມ່ນ ຊ່ວງທີ 4 ແຕ່ ເຊໂນ ແຂວງ ສະຫວັນນະເຂດ ຫາ ນາ ປົງ ແຂວງສາລະວັນ, ລວງຍາວທັງມົດ 135.2 ກິໂລແມັດ ມູນຄ່າປະເມີນເບື້ອງຕົ້ນ ແມ່ນ 1.235,82 ໂດລາສະຫະລັດ)
2. ໝູ່ບ້ານຈັດສັນສະໄໝໃຫມ່ສຳລັບບຸກຄົນທົ່ວໄປທີ່ມີລາຍໄດ້ຕ່ຳ ຈຳນວນ 200,000 ຫລັງໃນທົ່ວປະເທດ, ແມ່ນຍັງຊອກຫາຄູ່ຮ່ວມທຶນຈາກຕ່າງປະເທດ.
3. ໂຄງການກໍ່ສ້າງພື້ນຖານໂຄງລ່າງເຂດເສດຖະກິດພິເສດ ຫຼວງພະບາງ ມູນຄ່າ 2.5 ລ້ານໂດລາສະຫະລັດ ແມ່ນ ລໍຖ້າເຈົ້າຂອງໂຄງການສືບຕໍ່ປັກຫຼັກໝາຍເຂດແດນ ແລະ ຊົດເຊີຍຜົນກະທົບສິ່ງແວດລ້ອມແລ້ວຈຶ່ງສາມາດຈັດ ຕັ້ງປະຕິບັດໄດ້

VI. ໂຄງການໃນແຜນປີ 2022-2025

1- ໂຄງການພັດທະນາອະສັງຫາລິມະຊັບໃນເນື້ອທີ່ 500 ເຮັກຕາ ຢູ່ເຂດເສດຖະກິດພິເສດ ຫຼວງພະບາງ. ຄາດຄະເນມູນຄ່າການລົງທຶນ 50,000,000 ໂດລາ
2- ໂຄງການຂົວຂ້າມນ້ຳຂອງ ຫຼວງພະບາງ ມູນຄ່າ ປະມານ 38,000,000 ໂດລາ
3- ໄດ້ເຊັນສັນຍາເຊົ່າທີ່ດິນກັບບໍລິສັດຢູ່ ສປປ ຈີນ 3 ບໍລິສັດ ມູນຄ່າ 120,000,000 ໂດລາ
4- ໄດ້ເຊັນສັນຍາເຊົ່າສາງກັບບໍລິສັດຢູ່ ສປປ ຈີນ 2 ບໍລິສັດ ມູນຄ່າ 180,000,000 ໂດລາ
5- ໄດ້ເຊັນສັນຍາອະສັງຫາລິມະຊັບ(Permanent Resident)ກັບບໍລິສັດຢູ່ ສປປ ຈີນ 2 ບໍລິສັດ ມູນຄ່າ 200,000,000 ໂດລາ
6- ໂຄງການທາງເວັ້ນດອນໜຸນ

- **ລັກສະນະກຸ່ມລູກຄ້າເປົ້າໝາຍ**

ກຸ່ມລູກຄ້າເປົ້າໝາຍຂອງບໍລິສັດສາມາດແບ່ງໄດ້ເປັນລູກຄ້າຈາກພາກລັດ ແລະ ພາກເອກະຊົນ ໂດຍສະເພາະແມ່ນ ການກໍ່ສ້າງພື້ນຖານໂຄງລ່າງທີ່ຢູ່ໃນເຂດພາກເໜືອຂອງປະເທດເປັນສ່ວນໃຫຍ່ ແລະ ຂະຫຍາຍໄປຍັງແຂວງອື່ນໆ ຫຼື ໃນ ຂົງເຂດທົ່ວປະເທດ. ແຜນການຕະຫຼາດ ແມ່ນເນັ້ນຫນັກ ໃສ່ ພາກເອກະຊົນ ແລະ ຂະແໜງ ການພັດທະນາໃນການ ກໍ່ສ້າງໂຄງການຂະໜາດນ້ອຍ, ກາງ, ແລະ ໃຫຍ່ ຕາມລຳດັບ.

- **ການຊອກຫາໂຄງການ**

ຊ່ອງທາງການຈັດຈຳໜ່າຍຂອງບໍລິສັດແມ່ນໄດ້ມີການຮັບວຽກກໍ່ສ້າງຈາກພາກລັດໂດຍກົງ ທັ້ງໂດຍການຍື່ນຊອງ ປະມູນເພື່ອສະເໜີລາຄາ ແລະ ການເຈລະຈາຕໍ່ລອງວຽກທີ່ຕ້ອງຕົກລົງກັບເຈົ້າຂອງໂຄງການ ໂດຍບໍລິສັດຈະໄດ້ຮັບຊອງ ປະມູນໂຄງການ ເພື່ອນຳມາປະມວນສະເໜີລາຄາຕາມຂໍ້ກຳນົດ ໃນບາງຄັ້ງບໍລິສັດໄດ້ສະເໜີໂຄງການໄປຍັງເຈົ້າຂອງ ໂຄງການໂດຍກົງ ເພື່ອພິຈາລະນາອະນຸມັດໂຄງການກໍ່ສ້າງເສັ້ນທາງດັ່ງກ່າວ. ແຕ່ທັ້ງນັ້ນ, ທາງເຈົ້າຂອງໂຄງການ ຕ້ອງເຂົ້າ ມາກວດສອບຄວາມເປັນໄປໄດ້ຂອງການກໍ່ສ້າງເສັ້ນທາງ ຫຼື ໂຄງການ ດັ່ງກ່າວ. ເພື່ອສຶກສາຄວາມເປັນໄປໄດ້ໃນ ໂຄງການນັ້ນໆ. ເພື່ອເປັນການຫຼຸດຄວາມສ່ຽງຈາກການແຂ່ງຂັນໃນການປະມູນໂຄງການ.

- **ກົນລະຍຸດການແຂ່ງຂັນ**

ບໍລິສັດແມ່ນມີນະໂຍບາຍທີ່ຈະເພີ່ມວຽກງານກໍ່ສ້າງໃຫ້ຫຼາຍເພີ່ມຂຶ້ນ ທັ້ງໃນຮູບແບບຂອງໂຄງການທາງພາກລັດ ແລະ ເອກະຊົນ ເພື່ອເຮັດໃຫ້ບັນລຸເປົ້າໝາຍຫຼັກຂອງບໍລິສັດ ເປັນບໍລິສັດຜູ້ນຳທາງດ້ານການກໍ່ສ້າງ ແລະ ພັດທະນາໃນປະເທດ ແລະ ຈະຂະຫຍາຍທຸລະກິດໄປເຖິງຂົງເຂດປະຊາຄົມອາຊຽນ. ບໍລິສັດໄດ້ພັດທະນາກົນລະຍຸດຂອງການແຂ່ງຂັນເອົາໄວ້ດັ່ງຕໍ່ໄປນີ້ ເຊິ່ງຊ່ວຍໃຫ້ເກີດປະໂຫຍດໃນດ້ານການແຂ่งຂັນ ແລະ ເພື່ອບັນລຸເປົ້າໝາຍຂອງບໍລິສັດ.

ກ. ບໍລິສັດຮັບເໝົາກໍ່ສ້າງແບບຄົງວົງຈອນ

ບໍລິສັດເປັນບໍລິສັດຮັບເໝົາກໍ່ສ້າງແບບຄົງວົງຈອນ ແລະ ມີຄວາມພ້ອມໃນການສະເໜີໂຄງການ ຫຼື ມີຄວາມພ້ອມໃນການເຂົ້າປະມູນໂຄງການທັ້ງຂອງໂຄງການພາກລັດ ແລະ ພາກເອກະຊົນ ເຮັດໃຫ້ສົ່ງຜົນດີຕໍ່ຜົນປະກອບການ ຈະເຮັດໃຫ້ບໍລິສັດສາມາດເຂົ້າເປັນສ່ວນໜຶ່ງໃນຜູ້ນຳດ້ານອຸດສາຫະກຳການກໍ່ສ້າງຊັ້ນນຳຂອງປະເທດ ເລືອກລົງທຶນໃນອຸດສາຫະກຳພື້ນຖານໂຄງລ່າງເປັນຫຼັກ ແລະ ໂຄງການໃນພາກອະສັງຫາລິມະຊັບ ແນໃສ່ຄວາມຮູ້ ຄວາມຊ່ຽວຊານດ້ານເຕັກນິກການກໍ່ສ້າງຂອງບຸກຄະລາກອນ, ການນຳໃຊ້ເຕັກໂນໂລຊີການກໍ່ສ້າງທີ່ທັນສະໄໝ ແນໃສ່ການແຂ่งຂັນໃນໂຄງການທີ່ມີຂະໜາດໃຫຍ່ ແລະ ສະລັບຊັບຊ້ອນຫຼາຍຂຶ້ນ. ການມີແຫຼ่งວັດສະດຸກໍ່ສ້າง ແລະ ແຮงงานທີ່ມີປະສິບການ ໃນການກໍ່ສ້າงຢ่างกว้างขวาง, ອັນເຮັດໃຫ້ເປັນຜົນສຳເລັດຂອງບໍລິສັດ.

ຂ. ຄຸນະພາບ ແລະ ມາດຕະຖານຂອງວຽກງານ

ການຮັກສາຄຸນະພາບ ແລະ ມາດຕະຖານຂອງວຽกงาน ເປັນເຫດຜົນຫຼັກທີ່ບໍລິສັດປະສົບຜົນສຳເລັດທີ່ມາຈາກປະຫວັດການດຳເນີນວຽกงานທີ่ดีของบໍລິສັດ ທັ້ງໃນດ້ານການເຮັດວຽกให้แล้วตามกำหนดเวลา, ความน่าเชื่อถือ และคุณภาพของวຽกงาน มีความสามารถในการดำเนินงานตามสัญญา และ ການບໍລິການລູกค้าด้วยน้ำใจให้เป็นอย่างดี ເອົາໃຈໃส่ในรายละเอียด และ ซื่สัตต่อลูกค้า.

ຄ. ການສົ่งมอบใຫ้ทันกับเวลาที่กำหนด

ວຽกงานก่อสร้างพื้นฐานโครงล่าง โดยสะเพาะแม่นถะหมินหินทางเป็นวຽกที่ใหย่ ต้องใช้ไลยะเวลายาวนานพอสมควร บໍລິสัดแม่นต้องการสົ่งมอบงานให้ทันกับเวลา ในแบบแผนการที่ได้กำหนดไว้ เชิ่งบໍລິสัดเองแม่นมีชื่สียงในด้านการสົ่งมอบงานในกิงกับเวลาถือได้ว่าเป็นหนึ่งปัดใจหลักในการประสมผลสำเร็จของทุระกิดรับเหมาก่อสร้างที่ต้องใช้ความรับผิดชอบที่สูงมาเป็นไลยะเวลายาวนาน

บໍລິสัดแม่นมีการบໍລิหานงานย่างเป็นระบบ มีการอางแผนงานทุกขั้นตอน พัดทะนาสักกะยะพาบการเรัดวຽกของบุกคะลากอนย่างต่เนื่อง เพื่อให้การปะติบัดงานมีประสิดทิพาบ และ สำเร็จพายในละยะเวลาที่กำนิดไว้.

ง. ເອົาใจใส่ในรายละเอียดของโครงการ

บໍລິสัดแม่นมีการเอาใจใส่ในรายละเอียดโครงการย่างรอบคอบในโครงการต่างๆ ด้วยผู้บໍລิหาน และ นักวิสะวะกอนทีมีประสบการณ์สูง, มีความชำนาญในการก่อสร้างถือ-หาง และ ก่อสร้างอื่นๆ เพื่อกวดสอบกิดจะกำในวຽกการก่อสร้างแต่ละโครงการ เชิ่งช่วยให้บໍລิสัดมีการปับปุงประสิดทิพาบอยู่สะเหมี และ ชุดผ่อนต้นทุนการก่อสร้างในรูปแบบต่างๆ. นอกจากนี้, บໍລິสัดมีแผนวຽกงานที่จะบันลุเป้าหมายโดยพัดทะนาทางด้านแนวคิดใน

ດ້ານການບໍລິຫານ, ການນຳໃຊ້ເຕັກໂນໂລຊີສະໄໝໃໝ່ ເພື່ອຊ່ວຍໃນການປັບປຸງປະສິດທິພາບ ແລະ ຫຼຸດຜ່ອນຕົ້ນທຶນ ການກໍ່ສ້າງໃນຮູບແບບຕ່າງໆຕໍ່ໄປ.

ຈ. ຊື່ສັດ ເປັນທຳ ຕໍ່ຄູ່ຮ່ວມງານ

ການທີ່ບໍລິສັດແມ່ນມີຄວາມ ຊື່ສັດ ຈິງໃຈ ແລະ ເປັນທຳ ກັບພາກສ່ວນທີ່ກ່ຽວຂ້ອງທັ້ງໃນພາກສ່ວນທີ່ກ່ຽວຂ້ອງກັບເຈົ້າ ຂອງໂຄງການ ທັ້ງຜູ້ອອກແບບ ແລະ ຜູ້ຄວບຄຸມວຽກ ເນື່ອງຈາກວ່າຜູ້ອອກແບບເປັນຜູ້ບຸກຄົນທີ່ຮູ້ກ່ຽວກັບລາຍລະອຽດ ຂອງໂຄງການກໍ່ສ້າງຕ່າງໆ ເຊິ່ງການທີ່ ຊື່ສັດ ຈິງໃຈ ຍ້ອນເຫດຜົນນີ້ເອງ ຕັ້ງແຕ່ອະດີດທີ່ຜ່ານມາ ຈຶ່ງເຮັດໃຫ້ບໍລິສັດກ້າວ ຂຶ້ນເປັນບໍລິສັດທີ່ມີຊື່ສຽງ, ມີຄວາມສະນິດສະນົມກັບລູກຄ້າ ມີສາຍສຳພັນທີ່ດີກັບຜູ້ອອກແບບ ຜູ້ຄວບຄຸມວຽກ ແລະ ຄູ່ ຮ່ວມງານທຸກຝ່າຍມາໂດຍຕະຫຼອດ.

ສ. ການໄດ້ຮັບຄວາມເຊື່ອຖື ແລະ ໄວ້ວາງໃຈຈາກລູກຄ້າ

ຈາກຜົນງານຄວາມສຳເລັດໃນອະດີດທີ່ຜ່ານມາຂອງບໍລິສັດ ແມ່ນໄດ້ຮັບຄວາມໄວ້ວາງໃຈຈາກລູກຄ້າ ໄດ້ເປັນຢ່າງດີ ເຮັດ ໃຫ້ບໍລິສັດແມ່ນໄດ້ຮັບການຍອມຮັບຈາກລູກຄ້າເຈົ້າຂອງໂຄງການ. ແລະໄດ້ຮັບການຕິດຕໍ່ຈາກໜ່ວຍງານພາກລັດໃຫ້ ບໍລິສັດເຂົ້າຮ່ວມປະມູນໂຄງການຢ່າງຕໍ່ເນື່ອງ.

VII. ວຽກງານດ້ານຍຸດທະສາດອົງກອນ

ຈາກຄວາມຕັ້ງໃຈໃນການມອບສິ່ງທີ່ດີທີ່ສຸດ ສູ່ຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈທີ່ໄດ້ຮັບຈາກລູກຄ້າ, ພວກເຮົາ ພ້ອມແລ້ວທີ່ຈະກ້າວໄປສູ່ເປົ້າໝາຍໃນອະນາຄົດ:

4. ຂະຫຍາຍຖານລູກຄ້າໄປສູ່ພາກເອກກະຊົນ ທັ້ງໃນໂຄງການກໍ່ສ້າງແລະພັດທະນາພື້ນຖານໂຄງລ່າງຂະໜາດ ນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່.
5. ລິເລີ່ມໂຄງການພັດທະນາອະສັງຫາລິມະຊັບເພື່ອຕອບສະໜອງການຂະຫຍາຍຕົວຂອງຕົວເມືອງໃນທົ່ວ ປະເທດ.
6. ຮັກສາຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຈາກຖານລູກຄ້າທີ່ໄດ້ຮັບມາຕະຫຼອດໄລຍະເກືອບ 20 ປີ ດ້ວຍການໃຫ້ຄວາມສຳຄັນກັບຄຸນນະພາບ, ມາດຕະຖານ ການສົ່ງມອບງານກົງເວລາ ແລະ ບໍລິການທີ່ຊື່ສັດ ໃສ່ໃຈທຸກລາຍລະອຽດ.

ຜູ້ອຳນວຍການໃຫຍ່

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ທ່ານ ສີທາ ພົມມະຈິດ

ໜ່ວຍງານກວດກາພາຍໃນຂອງບໍລິສັດ

ທ່ານ ສຸວັນນີ ກອງພະຈິດ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

pwc

ເອກະສານລາຍງານການເງິນກາງປີ (ທົບທວນຄືນ)

ສຳລັບຮອບເວລາລາຍງານ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2022



www.pwc.com/la

ບົດລາຍງານຂອງຜູ້ກວດສອບໃນການທົບທວນຄືນເອກະສານລາຍງານການເງິນກາງປີ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນການເງິນກາງປີ ຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ (ບໍລິສັດ), ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ໃນວັນທີ 30 ມິຖຸນາ 2022, ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີດຽວກັນ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີໂດຍຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການສ້າງ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ ກຳນົດໄວ້ໃນ ບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນກາງປີ ຂອງບໍລິສັດ. ຄວາມຮັບຜິດຊອບ ຂອງພວກເຮົາຄືການ ອອກບົດລາຍງານ ເພື່ອສະແດງຄວາມເຫັນຕໍ່ເອກະສານລາຍງານການເງິນດັ່ງກ່າວ ບົນພື້ນຖານການທົບທວນຄືນ ຂອງພວກເຮົາ.

ຂອບເຂດ ຂອງການກວດສອບ

ພວກເຮົາໄດ້ດຳເນີນການກວດກາ ທົບທວນຄືນ ໂດຍສອດຄ່ອງກັບ ມາດຕະຖານ ການທົບທວນຄືນ ແບບສາກົນ 2410, "ການທົບທວນຄືນ ຂໍ້ມູນທາງການເງິນກາງປີທີ່ດຳເນີນການໂດຍຜູ້ກວດສອບບັນຊີອິດສະຫຼະຂອງກິດຈະການ". ການທົບທວນຄືນ ເອກະສານລາຍງານການເງິນ ກາງປີລວມມີ: ການສອບຖາມບຸກຄະລາກອນຂອງກິດຈະການ, ບຸກຄົນຜູ້ຮັບຜິດຊອບຕໍ່ຝ່າຍບັນຊີ ແລະ ການເງິນ, ດຳເນີນການວິໄຈຂໍ້ມູນ, ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນ ໃຫ້ຄວາມເຊື່ອໝັ້ນໜ້ອຍກວ່າການກວດສອບ, ເພາະການກວດສອບ ແມ່ນໄດ້ປະຕິບັດຕາມມາດຕະຖານການກວດສອບສາກົນ. ເພາະສະນັ້ນ, ການທົບທວນຄືນ ຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການ ກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບແກ່ພວກເຮົາໄດ້. ດັ່ງນັ້ນ ພວກເຮົາບໍ່ໄດ້ສະແດງຄວາມ ເຫັນ.

ສະຫຼຸບ

ບົນພື້ນຖານການທົບທວນຄືນ ຂອງພວກເຮົາ, ບໍ່ມີຫຍັງທີ່ສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າເອກະສານລາຍງານການເງິນດັ່ງກ່າວ ບໍ່ໄດ້ສະໜອງ ຂໍ້ມູນທີ່ຖືກຕ້ອງ ໃນລັກສະນະຕາມຫຼັກການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນ ນີ້.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີ໌ (ລາວ) ຈຳກັດຜູ້ດຽວ

ໂດຍ: ພິງພັນ ໂດມຣິງພານຸດົມ
ຮຸ້ນສ່ວນ

ວັນທີ: 29 ສິງຫາ 2022

1. ຂໍ້ມູນທົ່ວໄປ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ແມ່ນບໍລິສັດມະຫາຊົນ, ທີ່ຢູ່ຈົດທະບຽນຂອງບໍລິສັດແມ່ນຕັ້ງຢູ່ ໂຮງແຮມ ຄອນຕິເນນ ໂທພຣາຊ່າ, ບ້ານໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປ ລາວ.

ບໍລິສັດດຳເນີນກິດຈະການດ້ານການກໍ່ສ້າງ, ສ້ອມແປງ ແລະ ບຸລະນະຫົນທາງ, ຂົວ ແລະ ອື່ນໆ. ມີພຽງລູກຄ້າດຽວ ກໍ່ຄື ລັດຖະບານ ຂອງ ສປປ ລາວ (ລັດຖະບານລາວ).

ບໍລິສັດ ໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບ ໃນວັນທີ 10 ຕຸລາ 2017.

ເອກະສານລາຍງານການເງິນກາງປີນີ້ ໄດ້ຮັບອະນຸຍາດໃຫ້ອອກໂດຍຜູ້ອຳນວຍການ ຂອງບໍລິສັດ ໃນວັນທີ 29 ສິງຫາ 2022.

2. ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນກາງປີ ໄດ້ຖືກສ້າງຂຶ້ນສອດຄ່ອງກັບວິທີການບັນຊີຂອງ ບໍລິສັດ ທີ່ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2021. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ) ທີ່ສອດຄ່ອງ ກັບເອກະສານລາຍງານການເງິນປະຈຳປີ ຕາມກົດລະບຽບການເປີດເຜີຍ ທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນກາງປີ ຕ້ອງໄດ້ອ່ານຄວບຄູ່ກັບ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2021.

ສົມມຸດຕິຖານກ່ຽວກັບການດຳເນີນງານຕໍ່ເນື່ອງ

ບໍລິສັດພົບກັບການຂາດທຶນສຸດທິ ຈຳນວນ 1.056 ລ້ານກີບ ໃນລະຫວ່າງໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2022, (2021: 1.128 ລ້ານກີບ) ແລະ ໜີ້ສິນໝຸນວຽນແມ່ນເກີນຊັບສິນໝຸນວຽນ ເປັນຈຳນວນ 22.350 ລ້ານກີບ. ພາກສ່ວນກ່ຽວຂ້ອງໄດ້ ອອກຈົດໝາຍຢືນຢັນເຖິງບໍລິສັດ ວ່າຈະບໍ່ຮຽກເກັບເງິນກູ້ ແລະ ໜີ້ຕ້ອງສົ່ງ ນະວັນທີ 30 ມິຖຸນາ 2022, ລວມມູນຄ່າທັງໝົດ 58.841 ລ້ານກີບ ພາຍໃນ 12 ເດືອນຕໍ່ໜ້າ ເລີ່ມແຕ່ວັນທີ 30 ມິຖຸນາ 2022 ເປັນຕົ້ນໄປ.

ດັ່ງນັ້ນ, ເອກະສານລາຍງານການເງິນເຫຼົ່ານີ້ໄດ້ຖືກກະກຽມບົນພື້ນຖານການດຳເນີນງານຕໍ່ເນື່ອງ.

3. ເຫດການສຳຄັນທີ່ເກີດຂຶ້ນໃນລະຫວ່າງປີ

ການຕິດເຊື້ອພະຍາດ COVID-19 ໃນປະເທດລາວມີການຫຼຸດລົງ ໃນຊ່ວງເດືອນ ເມສາ 2022. ນອກຈາກນັ້ນ, ຕົວເລກຜູ້ເສຍຊີວິດ ແມ່ນຫຼຸດລົງເມື່ອທຽບໃສ່ປີທີ່ຜ່ານມາ ເຊິ່ງປະເທດລາວ ໄດ້ປະກາດເປີດຮັບນັກທ່ອງທ່ຽວເຂົ້າມາປະເທດ ໃນວັນທີ 9 ພຶດສະພາ 2022. ປະຈຸບັນ ນັກທ່ອງທ່ຽວຕ່າງປະເທດສາມາດເຂົ້າມາທ່ຽວໄດ້ເປັນປົກກະຕິ ແລະ ຍັງມີບາງເງື່ອນໄຂ ທີ່ກ່ຽວຂ້ອງກັບພະຍາດ COVID-19 ຍັງຄົງສືບຕໍ່ປະຕິບັດຢູ່.

ທາງຜູ້ບໍລິຫານໄດ້ທົບທວນເຖິງຜົນກະທົບຈາກເຫດການດັ່ງກ່າວຕໍ່ກັບການດຳເນີນທຸລະກິດເຫັນວ່າ ເນື່ອງຈາກສະພາບການຂອງ ຈຳນວນຜູ້ຕິດເຊື້ອໃນປະເທດລາວຂ້ອນຂ້າງຈຳກັດ ແລະ ສາມາດຄວບຄຸມໄດ້, ຕໍ່ກັບບັນຫາດັ່ງກ່າວບໍ່ໄດ້ກະທົບກັບການດຳເນີນທຸລະ ກິດຫຼາຍ ເຊິ່ງທາງຜູ້ບໍລິຫານພິຈາລະນາວ່າການແຜ່ລະບາດຂອງ ເຊື້ອພະຍາດ COVID-19 ໃນຄັ້ງນີ້ບໍ່ໄດ້ສົ່ງຜົນກະທົບຢ່າງມີສາລະ ສຳຄັນຕໍ່ກັບທຸລະກິດ.

ຜູ້ບໍລິຫານຈະສືບຕໍ່ຕິດຕາມການພັດທະນາຢ່າງຕໍ່ເນື່ອງ ແລະ ປະເມີນຜົນກະທົບຂອງຂໍ້ມູນທາງການເງິນກ່ຽວກັບການປະເມີນມູນຄ່າ ຊັບສິນ, ການສຳຮອງເງິນແຮ ແລະ ໜີ້ສິນທີ່ອາດເກີດຂຶ້ນຢ່າງສະໝ່ຳສະເໝີ.

ບໍລິສັດ ພຸສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານຖານະການເງິນ
ວັນທີ 30 ມິຖຸນາ 2022

ຊັບສິນ	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	5	56	176
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	6	153.348	153.049
ເຄື່ອງໃນສາງ		320	320
ຊັບສິນໝຸນວຽນອື່ນໆ	8	15.169	13.143
ລວມຊັບສິນໝຸນວຽນ		**168.893**	**166.688**
ຊັບສິນບໍ່ໝຸນວຽນ			
ຊັບສິມບັດຄົງທີ ມີຕົວຕົນ, ສຸດທິ	9	447.571	448.129
ເງິນກູ້ຢືມໄລຍະຍາວໃຫ້ພາກສ່ວນທີ່ກ່ຽວຂ້ອງ		861	861
ການລົງທຶນທາງການເງິນ - ຖືໄວ້ຈົນຄົບກຳນົດ	7	11.095	10.616
ລວມຊັບສິນບໍ່ໝຸນວຽນ		**459.527**	**459.606**
ລວມຊັບສິນ		**628.420**	**626.294**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	10	58.234	58.816
ເງິນກູ້ຢືມໄລຍະຍາວ ຈາກສະຖາບັນການເງິນ	11	38.422	38.422
ເງິນກູ້ຢືມໄລຍະຍາວ - ພາກສ່ວນທີ່ກ່ຽວຂ້ອງ	11	15.761	15.825
ອາກອນກຳໄລຄ້າງຈ່າຍ	12	13.337	13.337
ໜີ້ສິນໝຸນວຽນອື່ນໆ	13	65.489	61.661
ລວມໜີ້ສິນໝຸນວຽນ		**191.243**	**188.061**
ລວມໜີ້ສິນ		**191.243**	**188.061**
ທຶນ			
ທຶນຈົດທະບຽນ	14	582.000	582.000
ສ່ວນເພີ່ມມູນຄ່າຮຸ້ນ	14	12.540	12.540
ກຳໄລສະສົມ/(ຂາດທຶນສະສົມ)			
ສຳຮອງຕາມລະບຽບການ	15	11.572	11.572
ລໍ້ຖ້າແບ່ງປັນ		(168.935)	(167.879)
ລວມທຶນ		**437.177**	**438.233**
ລວມໜີ້ສິນ ແລະ ທຶນ		**628.420**	**626.294**

ທ່ານ ສີທາ ພິມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 29 ສິງຫາ 2022

ທ່ານ ນາງ ໄຮທອງ ພິມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 29 ສິງຫາ 2022

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ແຕ່ໜ້າທີ 6 ຫາ 15 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານຜົນໄດ້ຮັບ
ສຳລັບຮອບເວລາລາຍງານ ຫົກເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2022

	ບົດ ອະທິບາຍ	ທີ່ຍອນຄືນ 30 ມິຖຸນາ 2022 ລ້ານກີບ	ທີ່ຍອນຄືນ 30 ມິຖຸນາ 2021 ລ້ານກີບ
ລາຍຮັບຈາກ ການກໍ່ສ້າງ		-	6.441
ຕົ້ນທຶນໃນການກໍ່ສ້າງ		-	(2.141)
ກຳໄລລວມຂັ້ນຕົ້ນ		**-**	**4.300**
ລາຍຮັບອື່ນໆ		2.007	1.481
ກຳໄລ/(ຂາດທຶນ) ຈາກການດ້ອຍຄ່າ, ສຸດທິ		447	(1.353)
ລາຍຈ່າຍບໍລິຫານ		(1.976)	(1.350)
ກຳໄລ ຈາກອັດຕາແລກປ່ຽນ		2.480	9
ລາຍຈ່າຍດອກເບ້ຍ		(4.014)	(4.022)
ຂາດທຶນ ກ່ອນຈ່າຍອາກອນກຳໄລ		**(1.056)**	**(935)**
ລາຍຈ່າຍອາກອນກຳໄລ	17	-	(193)
ຂາດທຶນສຳລັບຮອບເວລາ		**(1.056)**	**(1.128)**
ຂາດທຶນຕໍ່ຮຸ້ນ			
ຂາດທຶນ ພື້ນຖານຕໍ່ຮຸ້ນ	18	(1,81)	(1,94)

ທ່ານ ສີທາ ພິມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 29 ສິງຫາ 2022

ທ່ານ ນາງ ໄຣທອງ ພິມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 29 ສິງຫາ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ແຕ່ໜ້າທີ 6 ຫາ 15 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບຮອບເວລາລາຍງານ ຫົກເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2022

	ໝາຍ ເຫດ	ທຶນຈົດທະບຽນ ລ້ານກີບ	ສ່ວນເພີ່ມມູນຄ່າຮຸ້ນ ລ້ານກີບ	ກຳໄລ/(ຂາດທຶນ) ສະສົມ ສຳຮອງຕາມລະບຽບການ ລ້ານກີບ	ກຳໄລ/(ຂາດທຶນ) ສະສົມ ຍັງບໍ່ທັນແບ່ງປັນ ລ້ານກີບ	ລວມ ລ້ານກີບ
ຍອດຍົກມາ ໃນວັນທີ 1 ມັງກອນ 2022 - ກວດສອບ	14,15	**582.000**	**12.540**	**11.572**	**(167.879)**	**438.233**
ຂາດທຶນພາຍໃນຮອບເວລາ		-	-	-	(1.056)	(1.056)
ໃນວັນທີ 30 ມິຖຸນາ 2022 - ທີ່ບໍ່ທວນຄືນ		**582.000**	**12.540**	**11.572**	**(168.935)**	**437.177**
ຍອດຍົກມາ ໃນວັນທີ 1 ມັງກອນ 2021 - ກວດສອບ	14,15	**582.000**	**12.540**	**11.572**	**(153.984)**	**452.128**
ຂາດທຶນພາຍໃນຮອບເວລາ		-	-	-	(1.128)	(1.128)
ໃນວັນທີ 30 ມິຖຸນາ 2021 - ທີ່ບໍ່ທວນຄືນ		**582.000**	**12.540**	**11.572**	**(155.112)**	**451.000**

ທ່ານ ສີທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 29 ສິງຫາ 2022

ທ່ານ ນາງ ໄຮທອງ ພົມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 29 ສິງຫາ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ແຕ່ໜ້າທີ 6 ຫາ 15 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານ ກະແສເງິນສົດ
ສຳລັບຮອບເວລາລາຍງານ ຫົກເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2022

	ບົດ ອະທິບາຍ	ທີ່ຍອນຄົນ 30 ມິຖຸນາ 2022 ລ້ານກີບ	ທີ່ຍອນຄົນ 30 ມິຖຸນາ 2021 ລ້ານກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ຂາດທຶນກ່ອນອາກອນກຳໄລສຳລັບຮອບເວລາ		(1.056)	(935)
ການດັດແກ້ສຳລັບ:			
- ກຳໄລ ຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ		(2.480)	(9)
- ຄ່າຫຼຸ້ຍຫ້ຽນ	9	558	2.051
- ລາຍຈ່າຍດອກເບ້ຍ		4.014	4.022
- (ກຳໄລ)/ຂາດທຶນ ຈາກການດ້ອຍຄ່າ, ສຸດທິ		(479)	2.632
ຂາດທຶນ ຈາກກິດຈະກຳການດຳເນີນງານ ກ່ອນການປ່ຽນແປງໃນຊັບສິນ ແລະ ໜີ້ສິນ ດຳເນີນງານ		**557**	**7.761**
ການປ່ຽນແປງໃນຊັບສິນດຳເນີນງານ:			
- ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		180	(8.530)
- ເງິນລົງທຶນທີ່ຖືໄວ້ຈົນຄົບກຳນົດ		(479)	(484)
- ຊັບສິນໝຸນວຽນອື່ນໆ		(2.026)	(1.465)
ການປ່ຽນແປງໃນໜີ້ສິນດຳເນີນງານ:			
- ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		1.898	2.325
- ໜີ້ສິນໝຸນວຽນອື່ນໆ		244	804
ເງິນສົດໄດ້ມາຈາກກິດຈະກຳດຳເນີນງານ		**374**	**412**
ລາຍຈ່າຍດອກເບ້ຍ		(430)	(221)
ອາກອນກຳໄລທີ່ຈ່າຍ		-	(22)
ເງິນສົດສຸດທິ ໄດ້ມາຈາກ (ໃຊ້ໄປ) ກິດຈະກຳດຳເນີນງານ		**(56)**	**169**
ກະແສເງິນສົດ ຈາກກິດຈະກຳ ການປະກອບທຶນ			
ເງິນສົດຮັບຈາກເງິນກູ້ຍືມ	11	-	1.950
ເງິນສົດຈ່າຍຄືນເງິນກູ້ຍືມ	11	(64)	(2.091)
ເງິນສົດສຸດທິ ໃຊ້ໄປ ໃນກິດຈະກຳ ການປະກອບທຶນ		**(64)**	**(141)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຫຼຸດລົງ/(ເພີ່ມຂຶ້ນ), ສຸດທິ		**(120)**	**28**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນຮອບເວລາ	5	176	88
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		-	-
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຮອບເວລາ	5	**56**	**116**
ລາຍການທີ່ບໍ່ແມ່ນເງິນສົດ			
ຫັກລ້າງໜີ້ຕ້ອງຮັບຈາກລັດຖະບານລາວ ແລະ ການລົງທຶນພັນທະບັດທີ່ຖືໄວ້ຈົນຄົບກຳນົດ	7	479	484

ທ່ານ ສີທາ ພິມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: 29 ສິງຫາ 2022

ທ່ານ ນາງ ໄຣທອງ ພິມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 29 ສິງຫາ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ແຕ່ໜ້າທີ 6 ຫາ 15 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

1. ຂໍ້ມູນທົ່ວໄປ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ແມ່ນບໍລິສັດມະຫາຊົນ, ທີ່ຢູ່ຈົດທະບຽນຂອງບໍລິສັດແມ່ນຕັ້ງຢູ່ ໂຮງແຮມ ຄອນຕິເນນ ໂທພຣາຊ່າ, ບ້ານໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປ ລາວ.

ບໍລິສັດດຳເນີນກິດຈະການດ້ານການກໍ່ສ້າງ, ສ້ອມແປງ ແລະ ບຸລະນະຫົນທາງ, ຂົວ ແລະ ອື່ນໆ. ມີພຽງລູກຄ້າດຽວ ກໍ່ຄື ລັດຖະບານ ຂອງ ສປປ ລາວ (ລັດຖະບານລາວ).

ບໍລິສັດ ໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບ ໃນວັນທີ 10 ຕຸລາ 2017.

ເອກະສານລາຍງານການເງິນກາງປີນີ້ ໄດ້ຮັບອະນຸຍາດໃຫ້ອອກໂດຍຜູ້ອຳນວຍການ ຂອງບໍລິສັດ ໃນວັນທີ 29 ສິງຫາ 2022.

2. ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນກາງປີ ໄດ້ຖືກສ້າງຂຶ້ນສອດຄ່ອງກັບວິທີການບັນຊີຂອງ ບໍລິສັດ ທີ່ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2021. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ) ທີ່ສອດຄ່ອງ ກັບເອກະສານລາຍງານການເງິນປະຈຳປີ ຕາມກິດລະບຽບການເປີດເຜີຍ ທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນກາງປີ ຕ້ອງໄດ້ອ່ານຄວບຄູ່ກັບ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2021.

ສົມມຸດຕິຖານກ່ຽວກັບການດຳເນີນງານຕໍ່ເນື່ອງ

ບໍລິສັດພົບກັບການຂາດທຶນສຸດທິ ຈຳນວນ 1.056 ລ້ານກີບ ໃນລະຫວ່າງໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2022, (2021: 1.128 ລ້ານກີບ) ແລະ ໜີ້ສິນໝຸນວຽນແມ່ນເກີນຊັບສິນໝຸນວຽນ ເປັນຈຳນວນ 22.350 ລ້ານກີບ. ພາກສ່ວນກ່ຽວຂ້ອງໄດ້ ອອກຈົດໝາຍຢືນຢັນເຖິງບໍລິສັດ ວ່າຈະບໍ່ຮຽກເກັບເງິນກູ້ ແລະ ໜີ້ຕ້ອງສົ່ງ ນະວັນທີ 30 ມິຖຸນາ 2022, ລວມມູນຄ່າທັງໝົດ 58.841 ລ້ານກີບ ພາຍໃນ 12 ເດືອນຕໍ່ໜ້າ ເລີ່ມແຕ່ວັນທີ 30 ມິຖຸນາ 2022 ເປັນຕົ້ນໄປ.

ດັ່ງນັ້ນ, ເອກະສານລາຍງານການເງິນເຫຼົ່ານີ້ໄດ້ຖືກກະກຽມບົນພື້ນຖານການດຳເນີນງານຕໍ່ເນື່ອງ.

3. ເຫດການສຳຄັນທີ່ເກີດຂຶ້ນໃນລະຫວ່າງປີ

ການຕິດເຊື້ອພະຍາດ COVID-19 ໃນປະເທດລາວມີການຫຼຸດລົງ ໃນຊ່ວງເດືອນ ເມສາ 2022. ນອກຈາກນັ້ນ, ຕົວເລກຜູ້ເສຍຊີວິດ ແມ່ນຫຼຸດລົງເມື່ອທຽບໃສ່ປີທີ່ຜ່ານມາ ເຊິ່ງປະເທດລາວ ໄດ້ປະກາດເປີດຮັບນັກທ່ອງທ່ຽວເຂົ້າມາປະເທດ ໃນວັນທີ 9 ພຶດສະພາ 2022. ປະຈຸບັນ ນັກທ່ອງທ່ຽວຕ່າງປະເທດສາມາດເຂົ້າມາທ່ຽວໄດ້ເປັນປົກກະຕິ ແລະ ຍັງມີບາງເງື່ອນໄຂ ທີ່ກ່ຽວຂ້ອງກັບພະຍາດ COVID-19 ຍັງຄົງສືບຕໍ່ປະຕິບັດຢູ່.

ທາງຜູ້ບໍລິຫານໄດ້ທົບທວນເຖິງຜົນກະທົບຈາກເຫດການດັ່ງກ່າວຕໍ່ກັບການດຳເນີນທຸລະກິດເຫັນວ່າ ເນື່ອງຈາກສະພາບການຂອງ ຈຳນວນຜູ້ຕິດເຊື້ອໃນປະເທດລາວຂ້ອນຂ້າງຈຳກັດ ແລະ ສາມາດຄວບຄຸມໄດ້, ຕໍ່ກັບບັນຫາດັ່ງກ່າວບໍ່ໄດ້ກະທົບກັບການດຳເນີນທຸລະ ກິດຫຼາຍ ເຊິ່ງທາງຜູ້ບໍລິຫານພິຈາລະນາວ່າການແຜ່ລະບາດຂອງ ເຊື້ອພະຍາດ COVID-19 ໃນຄັ້ງນີ້ບໍ່ໄດ້ສົ່ງຜົນກະທົບຢ່າງມີສາລະ ສຳຄັນຕໍ່ກັບທຸລະກິດ.

ຜູ້ບໍລິຫານຈະສືບຕໍ່ຕິດຕາມການພັດທະນາຢ່າງຕໍ່ເນື່ອງ ແລະ ປະເມີນຜົນກະທົບຂອງຂໍ້ມູນທາງການເງິນກ່ຽວກັບການປະເມີນມູນຄ່າ ຊັບສິນ, ການສຳຮອງເງິນແຮ ແລະ ໜີ້ສິນທີ່ອາດເກີດຂຶ້ນຢ່າງສະໜ່ຳສະເໝີ.

4. ການຄາດຄະເນ

ການກະກຽມຂໍ້ມູນທາງການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານ ມີການຕັດສິນໃຈ, ການຄາດຄະເນ ແລະ ສົມມຸດຕິຖານທີ່ມີຜົນກະທົບການນຳໃຊ້ນະໂຍບາຍການບັນຊີ ແລະ ປະລິມານການລາຍງານຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ຄ່າໃຊ້ຈ່າຍ ຜົນທີ່ແທ້ຈິງອາດຈະແຕກຕ່າງຈາກທີ່ປະມານ.

ໃນການກະກຽມຂໍ້ມູນທາງການເງິນ ຜູ້ບໍລິຫານໃຊ້ວິຈາລະນະຍານໃນການເລືອກໃຊ້ນະໂຍບາຍບັນຊີ ແລະ ເລືອກໃຊ້ຂໍ້ມູນທີ່ຈະໃຊ້ເຂົ້າໃນການປະມານການ, ເຊິ່ງການໃຊ້ວິຈາລະນະຍານດັ່ງກ່າວເປັນວິທີການດຽວກັນກັບວິທີທີ່ໃຊ້ໃນການເຮັດ ເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2021.

5. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄົນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ເງິນສົດໃນມື	15	79
ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ	41	97
ລວມ	**56**	**176**

6. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	ທົບທວນຄົນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ໜີ້ຕ້ອງຮັບການຄ້າ	314.515	314.994
ຫັກ: ສຳຮອງໜີ້ສົງໄສຈະເສຍ	(296.563)	(297.010)
ໜີ້ຕ້ອງຮັບການຄ້າ. ສຸດທິ	17.952	17.984
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 19 (ຂ)	80.878	76.682
ເງິນໃຫ້ກູ້ຢືມໄລຍະສັ້ນແກ່ ກຸ່ມບໍລິສັດ ພູສີ (ບົດອະທິບາຍຂໍ້ 19 (ຂ)	54.464	55.941
ໜີ້ຕ້ອງຮັບອື່ນໆ	54	2.442
ລວມ	**153.348**	**153.049**

7. ການລົງທຶນທາງການເງິນ - ຖືໄວ້ຈົນຄົບກຳນົດ

	ທົບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ຍອດຍົກມາ ນະວັນທີ 1 ມັງກອນ	10.616	-
ເພີ່ມຂຶ້ນ*	479	10.616
ລວມ	**11.095**	**10.616**

* ໃນລະຫວ່າງໄລຍະຮອບເວລາ ບໍລິສັດໄດ້ຮັບພັນທະບັດທີ່ອອກໂດຍກະຊວງການເງິນ ເພື່ອຊຳລະໜີ້ຕ້ອງຮັບຈາກ ໂຄງການກໍ່ສ້າງ.

8. ຊັບສິນໝຸນວຽນອື່ນໆ

	ທົບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ດອກເບ້ຍຄ້າງຮັບຈາກພາກສ່ວນທີ່ກ່ຽວຂ້ອງ*	14.224	12.493
ເງິນລ່ວງໜ້າໃຫ້ຜູ້ສະໜອງ	205	205
ເງິນລ່ວງໜ້າໃຫ້ພະນັກງານ	38	38
ຄ່າໃຊ້ຈ່າຍຈ່າຍລ່ວງໜ້າ	68	48
ໜີ້ຕ້ອງຮັບອື່ນໆ	634	359
ລວມ	**15.169**	**13.143**

* ດອກເບ້ຍຄ້າງຮັບຈາກພາກສ່ວນທີ່ກ່ຽວຂ້ອງ - ກ່ຽວຂ້ອງກັບເງິນກູ້ຢືມໃຫ້ກຸ່ມບໍລິສັດພູສີໃນບົດອະທິບາຍຂໍ້ທີ 6.

9. ຊັບສິມບັດຄົງທີ່ ມີຕົວຕົນ, ສຸດທິ

	ລ້ານກີບ
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ 2022 - ກວດສອບ	448.129
ເພີ່ມຂຶ້ນ	-
ຄ່າຫຼ້ຍຫ້ຽນ	(558)
ຍອດເຫຼືອທ້າຍຮອບເວລາ ສຸດທິ ໃນວັນທີ 30 ມິຖຸນາ 2022 - ທົບທວນຄືນ	**447.571**

ທີ່ດິນຈຳນວນ 37.681 ລ້ານກີບ ແມ່ນ ເປັນຫຼັກຊັບຄ້ຳປະກັນເງິນກູ້ຢືມ (ບົດອະທິບາຍ 11) ແລະ ຈຳນວນ 401.569 ລ້ານກີບ ແມ່ນຫຼັກຊັບຄ້ຳປະກັນເພື່ອກູ້ຢືມຈາກກຸ່ມບໍລິສັດພູສີ.

ຄ່າຫຼ້ຍຫ້ຽນຈຳນວນ 558 ລ້ານກີບແມ່ນໄດ້ຖືກຄິດໄລ່ເຂົ້າເປັນລາຍຈ່າຍບໍລິຫານ.

10. ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ໜີ້ຕ້ອງສົ່ງການຄ້າ - ພາກສ່ວນອື່ນ	15.154	14.358
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 19) ຂ)*	43.080	44.458
ລວມ	**58.234**	**58.816**

* ໃນລະຫວ່າງໄລຍະເວລາ, ບໍລິສັດໄດ້ຕົກລົງກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການກຳນົດອັດຕາແລກປ່ຽນເງິນຕາຕ່າງປະເທດຄົງທີ່, ສຳລັບເງິນໂດລາສະຫະລັດເປັນເງິນກີບ.

11. ເງິນກູ້ຢືມ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ສະຖາບັນການເງິນ	38.422	38.422
ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 19) ຂ)	15.761	15.825
ລວມ	**54.183**	**54.247**

	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ໝຸນວຽນ	54.183	54.247
ບໍ່ໝຸນວຽນ	-	-
ລວມ	**54.183**	**54.247**

ລາຍການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງລຸ່ມນີ້:	ລ້ານກີບ
ຍອດຍົກມາ ວັນທີ 1 ມັງກອນ 2022 - ກວດສອບ	**54.247**
ເພີ່ມຂຶ້ນ	-
ຊຳລະເງິນກູ້ຢືມຄືນ	(64)
ຍອດເຫຼືອ ໃນວັນທີ 30 ມິຖຸນາ 2022 - ທີ່ບທວນຄືນ	**54.183**

11. ເງິນກູ້ຢືມ, ສຸດທິ (ຕໍ່)

ເງິນກູ້ຢືມຈາກສະຖາບັນການເງິນ:

ບໍລິສັດ ໄດ້ເຊັນສັນຍາເງິນກູ້ຢືມຈຳນວນ 36.000 ລ້ານກີບ ແລະ 5.000 ລ້ານກີບ ກັບ ທະນາຄານ ເອັດສທີ ຈຳກັດ ເພື່ອເປັນທຶນໝຸນວຽນ ສຳລັບການກໍ່ສ້າງ ທາງ ເຊິ່ງມີອັດຕາດອກເບ້ຍ 17% ແລະ 13% ຕໍ່ປີ ຕາມລຳດັບ ນັບຕັ້ງແຕ່ ວັນທີ 29 ພຶດສະພາ 2015, ເງິນກູ້ຢືມນີ້ແມ່ນມີທີ່ດິນຂອງບໍລິສັດ ເປັນຫຼັກຊັບຄ้ำປะกัน (ບົດອະທິບາຍຂໍ້ 9) ແລະ ທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງ, ບໍລິສັດ ຕ້ອງໄດ້ຊຳລະຕົ້ນທຶນພາຍໃນ 3 ປີ ນັບແຕ່ວັນທີ່ທີ່ເບີກເງິນກູ້ຄັ້ງທຳອິດໃນແຕ່ລະປີ ແລະ ຈ່າຍດອກເບ້ຍເປັນລາຍເດືອນ.

ນະວັນທີລາຍງານ, ບໍລິສັດ ຢູ່ໃນລະຫວ່າງເຈລະຈາເງື່ອນໄຂຄືນໃໝ່ກັບຜູ້ໃຫ້ກູ້ຢືມ ແລະ ບໍລິສັດຍັງສືບຕໍ່ ຮັບຮູ້ລາຍຈ່າຍດອກເບ້ຍ ອີງຕາມເງື່ອນໄຂທີ່ລະບຸໄວ້ໃນຂ້າງເທິງ.

ການວິເຄາະເງິນກູ້ຢືມດັ່ງກ່າວມີດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ຕ່ຳກວ່າ 1 ປີ	54.183	54.247
ຫຼາຍກວ່າ 1 ປີ ແຕ່ບໍ່ເກີນ 5 ປີ	-	-
ລວມ	**54.183**	**54.247**

12. ອາກອນກຳໄລຄ้างจ่าย

ອີງຕາມການປະຕິບັດການຊຳລະອາກອນລະຫວ່າງໜ່ວຍງານສ່ວຍສາອາກອນ ແລະ ບໍລິສັດ, ອາກອນກຳໄລຖືກຄິດໄລ່ໂດຍການປะเมินອັດຕາກຳໄລສຸດທິ ຄູນໃຫ້ອັດຕາອາກອນກຳໄລ ແລະ ລາຍໄດ້ຈາກການກໍ່ສ້າງ. ອາກອນກຳໄລຈະໄດ້ຮັບການສະສາງຄືນເມື່ອ ລັດຖະບານຈ່າຍເງິນໃຫ້ແກ່ບໍລິສັດ.

ໃນວັນທີ 30 ມິຖຸນາ 2022, ອາກອນກຳໄລຄ้างจ่ายแม่นมาจากลายธับการก่อสร้าง แต่ลัดถะบาน ยังบ่ทันได้ชำละเทื่อ.

13. ໜີ້ສິນໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ອາກອນມູນຄ່າເພີ່ມຄ້າງຈ່າຍ*	31.211	31.211
ດອກເບ້ຍຄ້າງຈ່າຍຈາກສະຖາບັນການເງິນ	26.865	24.012
ດອກເບ້ຍຄ້າງຈ່າຍຈາກພາກສ່ວນທີ່ກ່ຽວຂ້ອງ	2.565	1.835
ເງິນປັນຜົນຄ້າງຈ່າຍ	1.863	1.863
ເງິນຮັບລ່ວງໜ້າຈາກ ຜູ້ຮັບເໝົາ	754	754
ເງິນຮັບລ່ວງໜ້າຈາກລັດຖະບານ	893	893
ເງິນເດືອນຄ້າງຈ່າຍ	154	-
ອື່ນໆ	1.184	1.093
ລວມ	**65.489**	**61.661**

* ອາກອນມູນຄ່າເພີ່ມຄ້າງຈ່າຍ ໄດ້ຖືກຄິດໄລ່ໂດຍ ຄູນໃຫ້ 10% (ກ່ອນປີ 2021) ຂອງລາຍຮັບຈາກການກໍ່ສ້າງ ແລະ ຈະຖືກຈ່າຍກໍ່ຕໍ່ເມື່ອລັດຖະບານລາວຊຳລະໜີ້ໃຫ້ບໍລິສັດ.

ໃນໄລຍະຮອບເວລາ, ລັດຖະບານລາວໄດ້ຫຼຸດອັດຕາອາກອນມູນຄ່າເພີ່ມ (VAT) ຈາກ 10% ເປັນ 7% ນັບແຕ່ວັນທີ 1 ມັງກອນ 2022 ເປັນຕົ້ນໄປ.

14. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນໃນທຶນຈົດທະບຽນ

ໃນວັນທີ 30 ມິຖຸນາ 2022 ບໍລິສັດມີຮຸ້ນ ຈຳນວນ 582.000.000 ຮຸ້ນ ເຊິ່ງມີມູນຄ່າຮຸ້ນລະ 1.000 ກີບ ແລະ ໄດ້ຊຳລະຄົບໝົດແລ້ວ.

ບໍລິສັດ ເກີດມີສ່ວນເພີ່ມຂອງມູນຄ່າຮຸ້ນ ຈຳນວນ 12.540 ລ້ານກີບ ແລະ ຖືກຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບໃນປີ 2017.

15. ສຳຮອງຕາມລະບຽບການ

ສຳຮອງຕາມລະບຽບການແມ່ນຕັ້ງຂຶ້ນຕາມກົດໝາຍວິສາຫະກິດ ຂອງ ສປປ ລາວ ເຊິ່ງກຳນົດໃຫ້ຫັກ 10% ຂອງກຳໄລສຸດທິປະຈຳປີເປັນເງິນສຳຮອງຈົນກວ່າເງິນສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ.

16. ເງິນປັນຜົນ

2022:
ໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີທີ່ໄດ້ຈັດຂຶ້ນວັນທີ 29 ເມສາ 2022. ຜູ້ຖືຮຸ້ນໄດ້ອະນຸມັດບໍ່ຈ່າຍເງິນປັນຜົນສຳລັບປີ 2021 ເນື່ອງຈາກຂາດທຶນຈາກການດຳເນີນທຸລະກິດ.

2021:
ໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີທີ່ໄດ້ຈັດຂຶ້ນວັນທີ 28 ເມສາ 2021. ຜູ້ຖືຮຸ້ນໄດ້ອະນຸມັດບໍ່ຈ່າຍເງິນປັນຜົນສຳລັບປີ 2020 ເນື່ອງຈາກຂາດທຶນຈາກການດຳເນີນທຸລະກິດ.

17. ລາຍຈ່າຍອາກອນກຳໄລ

ຕາມຫຼັກການຊຳລະອາກອນກຳໄລ ລະຫວ່າງ ເຈົ້າໜ້າທີ່ສ່ວຍສາອາກອນ ແລະ ບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ (ບົດອະທິບາຍຂໍ້ 12), ອາກອນກຳໄລ ແມ່ນສະແດງເຖິງໜີ້ຕ້ອງສົ່ງອາກອນກຳໄລຈາກລາຍຮັບຂອງການກໍ່ສ້າງ ແຕ່ລັດຖະບານຂອງ ສປປ ລາວ ຍັງບໍ່ທັນໄດ້ຊຳລະເງິນ.

18. ຂາດທຶນພື້ນຖານຕໍ່ຮຸ້ນ

ໃນວັນທີ 30 ມິຖຸນາ 2022, ຂາດທຶນພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການແບ່ງປັນຂາດທຶນສຸດທິຂອງຜູ້ຖືຮຸ້ນຂອງບໍລິສັດ. ໂດຍຈຳນວນສະເລ່ຍນ້ຳໜັກຂອງຮຸ້ນສາມັນໃນລະຫວ່າງປີ.

	ທົບທວນຄືນ 30 ມິຖຸນາ 2022 ລ້ານກີບ	ທົບທວນຄືນ 30 ມິຖຸນາ 2021 ລ້ານກີບ
ຈຳນວນສະເລ່ຍຂອງຮຸ້ນສາມັນ (ລ້ານຮຸ້ນ)	582	582
(ຂາດທຶນ) ສຸດທິໃນປີ ໃຫ້ຜູ້ຖືຮຸ້ນ (ລ້ານກີບ)	(1.056)	(1.128)
ຂາດທຶນ ພື້ນຖານຕໍ່ຮຸ້ນ (ກີບ)	**(1,81)**	**(1,94)**

19. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ໃນວັນທີ 30 ມິຖຸນາ 2022, ບໍລິສັດ ແມ່ນຢູ່ພາຍໃຕ້ການຄວບຄຸມໂດຍ ຄອບຄົວ ພົມມະຈິດ, ເຊິ່ງຖືກຮຸ້ນ 86% ຂອງ ຮຸ້ນບໍລິສັດ (2021: 86%). ສ່ວນຮຸ້ນທີ່ເຫຼືອ 14% ແມ່ນຖືຮຸ້ນໂດຍບຸກຄົນທົ່ວໄປ, ບໍລິສັດຖືກຄວບຄຸມໂດຍ ທ່ານ ສີທອງ ພົມມະຈິດເຊິ່ງ ເປັນຜູ້ບໍລິຫານຂອງກຸ່ມບໍລິສັດ ພູສີ ຈຳກັດ ຜູ້ດຽວ (ກຸ່ມບໍລິສັດ ພູສີ).

19. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນລະຫວ່າງໄລຍະ ໄດ້ວິເຄາະດັ່ງລຸ່ມນີ້:

ກ) ຊື້ສິນຄ້າ ຫຼື ບໍລິການ ແລະ ອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ	ທີ່ບທວນຄືນ 30 ມິຖຸນາ 2021 ລ້ານກີບ
ລາຍຮັບດອກເບ້ຍຈາກ ພູສີກຣຸບ	1.731	1.474
ລາຍຈ່າຍດອກເບ້ຍ	830	838
ຄ່ານ້ຳມັນ	243	90
ຄ່າເຊົ່າ	90	90

ຂ) ຍອດຄ້າງຊຳລະກັບພາກສ່ວນທີ່ກ່ຽວຂ້ອງ

	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ຈຳນວນເງິນກັບພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ຂໍ້ 6) (1)	80.878	76.682
ເງິນໃຫ້ກູ້ຢືມໄລຍະສັ້ນແກ່ ກຸ່ມບໍລິສັດ ພູສີ (ບົດອະທິບາຍຂໍ້ 6) (2)	54.464	55.941
ເງິນໃຫ້ກູ້ຢືມໄລຍະສັ້ນແກ່ພາກສ່ວນທີ່ກ່ຽວຂ້ອງ	861	861
ໜີ້ຕ້ອງສົ່ງອື່ນໆ - ກຸ່ມບໍລິສັດ ພູສີ (ບົດອະທິບາຍຂໍ້ 10)	43.080	44.458
ເງິນໃຫ້ກູ້ຢືມໄລຍະຍາວ (ບົດອະທິບາຍຂໍ້ 11) (3)	15.761	15.825

(1) ຈຳນວນເງິນກັບພາກສ່ວນທີ່ກ່ຽວຂ້ອງປະກອບມີ: ກຸ່ມບໍລິສັດ ພູສີ ຈຳກັດຜູ້ດຽວ ເຊິ່ງເປັນເງິນທຶນໝຸນວຽນໂດຍບໍ່ມີດອກເບ້ຍ ແລະ ສາມາດຮຽກເກັບໄດ້ໃນເວລາທີ່ຕ້ອງການ.

(2) ໃນວັນທີ 27 ທັນວາ 2017, ບໍລິສັດໄດ້ເຮັດສັນຍາເງິນກູ້ຢືມໄລຍະສັ້ນ ຈຳນວນ 86.531 ລ້ານກີບ ກັບກຸ່ມບໍລິສັດ ພູສີ ເພື່ອລົງທຶນໃນການພັດທະນາໂຄງການເມືອງໃໝ່ ທີ່ຫຼວງພະບາງ ເຊິ່ງອັດຕາດອກເບ້ຍ 5% ຕໍ່ປີ, ບໍ່ມີຫຼັກຊັບຄ້ຳປະກັນ.

19. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

(3) ລາຍການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ຍອດຍົກມາ	15.825	16.000
ເພີ່ມຂຶ້ນ	-	3.600
ຊຳລະຄືນເງິນຕົ້ນ	(64)	(3.775)
ຍອດເຫຼືອທ້າຍ	**15.761**	**15.825**

ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງເຊິ່ງມີອັດຕາດອກເບ້ຍຢູ່ລະຫວ່າງ 9.75% ເຖິງ 11.13% ຕໍ່ປີ ແລະ ໃຊ້ສຳລັບການດຳເນີນງານໃນບໍລິສັດ. ເງື່ອນໄຂການຊຳລະຄືນເງິນຕົ້ນແມ່ນ ຢູ່ລະຫວ່າງ 1 ຫາ 4 ປີ ແລະ ເງິນຕົ້ນຈະຖືກຊຳລະຄືນທັງໝົດເມື່ອສິ້ນສຸດສັນຍາ, ເລີ່ມຈາກປີ 2017 ເຖິງ 2022.

ເງິນກູ້ຢືມດັ່ງກ່າວແມ່ນສະກຸນເງິນ ລາວກີບ ແລະ ໄດ້ວິເຄາະໄລຍະເວລາຂອງເງິນກູ້ຢືມດັ່ງລຸ່ມນີ້:

	ທີ່ບທວນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ຕ່ຳກວ່າ 1 ປີ	15.761	15.825
ຫຼາຍກວ່າ 1 ປີ ແຕ່ບໍ່ເກີນ 5 ປີ	-	-
ຫຼາຍກວ່າ 5 ປີ	-	-
ລວມ	**15.761**	**15.825**

ຄ) ຄ່າຕອບແທນຜູ້ບໍລິຫານ

ໃນລະຫວ່າງປີບໍ່ໄດ້ຊຳລະຄ່າຕອບແທນຜົນປະໂຫຍດໃຫ້ແກ່ຄະນະຜູ້ອຳນວຍການ.

20. ພາລະຜູກພັນ

	ທີ່ຍທອນຄືນ 30 ມິຖຸນາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ພັນທະຄ່າເຊົ່າຫ້ອງການ *	615	705

* ບໍລິສັດເປັນຜູ້ເຊົ່າທີ່ດິນ ແລະ ຫ້ອງການ ພາຍໃຕ້ສັນຍາເຊົ່າໃນການດຳເນີນງານໂດຍບໍ່ມີການຍົກເລີກສັນຍາ. ໄລຍະເຊົ່າແມ່ນ 10 ປີ ແລະ ສ່ວນໃຫຍ່ຂອງສັນຍາເຊົ່າສາມາດຕໍ່ສັນຍາເມື່ອສັນຍາຈະໝົດອາຍຸຕາມການຕົກລົງກັນ.

21. ເຫດການທີ່ເກີດຂຶ້ນຫລັງມື້ລາຍງານ

ບໍ່ມີເຫດການທີ່ເປັນສາລະສຳຄັນເກີດຂຶ້ນຫລັງຈາກວັນທີ 30 ມິຖຸນາ 2022 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນ.